ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 664/ທຫລ

ນະຄອນຫຼວງວຽງຈັນ, ວັນທີ: 02 SEP 2015

# ຂໍ້ຕົກລົງ

## ວ່າດ້ວຍຄ່າບໍລິການຂອງທະນາຄານ ແຫ່ງ ສປປ ລາວ

- ອີງຕາມມາດຕາ 11 ຂອງກົດລະບຽບເລກທີ 03/ທຫລ ວ່າດ້ວຍການບໍລິຫານທຸລະກິດເງິນຕາຕ່າງປະເທດ ຂອງ ທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 03/ທຫລ, ລົງວັນທີ 28 ທັນວາ 2000;
- ອີງໃສ່ການໃຊ້ຈ່າຍຕົວຈິງຂອງ ທະນາຄານ ແຫ່ງ ສປປ ລາວ ໃນການສະໜອງການບໍລິການຕ່າງໆ.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1:** ການເກັບຄ່າບໍລິການຂອງທະນາຄານແຫ່ງ ສປປ ລາວ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

### I. ຄ່າບໍລິການຄຸ້ມຄອງດ້ານບັນຊີ

1. ການອອກໜັງສືຢັ້ງຢືນເງິນຝາກ — 20.000 ກີບ/ຄັ້ງ/ບັນຊີ
2. ຄ່າພິມບັນຊີສຳຮອງ (A/C Statement)
   - ຈຳນວນ 1-15 ໃບ — 10.000 ກີບ/ຄັ້ງ/ເດືອນ/ບັນຊີ
   - ຈຳນວນ 16-30 ໃບ — 20,000 ກີບ/ຄັ້ງ/ເດືອນ/ບັນຊີ
   - ຈຳນວນ 31-50 ໃບ — 30,000 ກີບ/ຄັ້ງ/ເດືອນ/ບັນຊີ
   - ຈຳນວນ 51 ໃບ ຂຶ້ນໄປ — 50,000 ກີບ/ຄັ້ງ/ເດືອນ/ບັນຊີ

### II. ຄ່າບໍລິການການໂອນເງິນ

1. ໂອນເງິນອອກຕ່າງປະເທດ
   - ຄ່າ SWIFT — 300.000 ກີບ/ຄັ້ງ
   - ຄ່າທຳນຽມໂອນ — 0,075%/ມູນຄ່າ/ຄັ້ງ

   ໝາຍເຫດ: ຄ່າທຳນຽມໂອນເງິນອອກ ຕ່ຳສຸດ 50.000 ກີບ ແລະ ສູງສຸດ 5.000.000 ກີບ ແລະ ອາດມີຄ່າທຳນຽມທີ່ທະນາຄານຕົວແທນຢູ່ ຕ່າງປະເທດເກັບຕື່ມ.
2. ໂອນເງິນເຂົ້າຈາກຕ່າງປະເທດ — 0,05%/ມູນຄ່າ/ຄັ້ງ

   ໝາຍເຫດ: ຄ່າທຳນຽມໂອນເງິນເຂົ້າ ຕ່ຳສຸດ 50.000 ກີບ ແລະ ສູງສຸດ 3.000.000 ກີບ ແລະ ອາດມີຄ່າທຳນຽມທີ່ທະນາຄານຕົວແທນຢູ່ ຕ່າງປະເທດເກັບຕື່ມ.
3. ຄ່າໂອນເງິນໄປຕ່າງແຂວງໂດຍໃຊ້ໂທລະສານ, ແຟັກ — 15.000 ກີບ/ຄັ້ງ
4. ໂອນເງິນໃຫ້ອົງການຈັດຕັ້ງສາກົນເຂົ້າບັນຊີລູກຄ້າຢູ່ ສປປ ລາວ — 30.000 ກີບ/ຄັ້ງ

| | |
|---|---|
| 5. ເກັບຄ່າໂອນເງິນຈາກບັນຊີກະແສລາຍວັນກັບຄືນ ເຂົ້າບັນຊີເງິນແຮຝາກບັງຄັບ (ກໍລະນີທະນາຄານທຸລະກິດ ບໍ່ເປັນເຈົ້າການໃນການໂອນເງິນ) | 0,1% ຂອງຈໍານວນ ເງິນທີ່ນໍາໃຊ້/ຄັ້ງ |

**III. ຄ່າບໍລິການສູນຊໍາລະສະສາງ**

| | |
|---|---|
| 1. ຄ່າສະມາຊິກຢູ່ສູນກາງ | 2.000.000 ກີບ/ປີ |
| 2. ຄ່າສະມາຊິກຢູ່ສາຂາ | 2.000.000 ກີບ/ປີ |

**IV. ຄ່າບໍລິການອອກໃບສັ່ງຈ່າຍບ້ວງເງິນຊ່ວຍເຫຼືອລ້າຈາກລັດຖະບານຍີ່ປຸ່ນ**

| | |
|---|---|
| 1. ອອກ A/P (Authorization to pay) ສໍາລັບບ້ວງ Grant Aid For Project | 0,12% ມູນຄ່າ AP + 25.000 ເຢັນ |
| 2. ອອກ BDA (Blanket Disbursement Authorization) ສໍາລັບບ້ວງ Grant Aid For Project | 0,12% ມູນຄ່າ AP + 25.000 ເຢັນ |

**V. ຄ່າບໍລິການຂໍກວດຄືນ ຫຼື ສໍາເນົາເອກະສານຍ້ອນຫຼັງ**

| | |
|---|---|
| - ຕໍ່າກວ່າ 1 ປີ ລົງມາ | 20.000 ກີບ/ຄັ້ງ/ລາຍການ |
| - ເກີນ 1 - 3 ປີ (ກໍລະນີສາມາດສະໜອງໄດ້) | 100.000 ກີບ/ຄັ້ງ/ລາຍການ |
| - ເກີນ 3 - 5 ປີ(ກໍລະນີສາມາດສະໜອງໄດ້) | 200.000 ກີບ/ຄັ້ງ/ລາຍການ |
| - ເກີນ 5-10 ປີ (ກໍລະນີສາມາດສະໜອງໄດ້) | 300.000 ກີບ/ຄັ້ງ/ລາຍການ |

**VI. ຄ່າປັບໃໝໃນການຍົກເລີກສັນຍາຕ່າງໆ**

| | |
|---|---|
| - ສັນຍາຊື້-ຂາຍຝາກເງິນຕາຕ່າງປະເທດ (FX Swaps) | 2% ຂອງຈໍານວນເງິນຕາຕ່າງປະ ເທດທີ່ຂໍຍົກເລີກ |
| - ສັນຍາຊື້- ຂາຍເງິນຕາຕ່າງປະເທດ | 2% ຂອງຈໍານວນເງິນຕາຕ່າງປະ ເທດທີ່ຂໍຍົກເລີກ |

**VII. ລາຄາເອກະສານຕ່າງໆ**

| | |
|---|---|
| - ຄ່າປື້ມແຊັກ (1 ຫົວມີ 20 ໃບ) | 40,000 ກີບ/ຫົວ |
| - ໃບມອບສິດໂອນເງິນ | 60.000 ກີບ/ຫົວ |
| - ໃບຂໍຖອນເງິນ | 20.000 ກີບ/ຫົວ |

**ມາດຕາ 2:** ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 711/ທຫລ, ລົງວັນທີ 07/09/2009 ແລະ ຂໍ້ຕົກລົງສະບັບເລກທີ 86/ທຫລ, ລົງວັນທີ 08/02/2008 ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ.ລາວ ຜູ້ວ່າການ

**ດຣ. ສົມພາວ ໄຟສິດ**